ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ : 0039 /ກປ

ນະຄອນຫຼວງວຽງຈັນ, ວັນທີ : 11 JAN 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍຫຼັກການພື້ນຖານກ່ຽວກັບການນຳໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດ ເຂົ້າໃນການຄຸ້ມຄອງຜະລິດຕະພັນພືດ ແລະສັດ

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດເລກທີ03/ສພຊ, ລົງວັນທີ25 ກໍລະກົດ2008;
- ອີງຕາມດຳລັດວ່າດ້ວຍການແຈ້ງ ແລະການສະໜອງຂໍ້ມູນທີ່ຕິດພັນກັບການຄ້າ ເລກທີ 363/ນຍ, ລົງວັນທີ 19 ສິງຫາ 2010;
- ອີງຕາມໜັງສືສະເໜີຂອງກົມແຜນການ ເລກທີ 0090/ກຜກ, ລົງວັນທີ 09 ມັງກອນ 2012.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫລັກການພື້ນຖານກ່ຽວກັບການນຳໃຊ້ມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດ, ການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການດັ່ງກ່າວ ເພື່ອຮັບປະກັນຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ ແລະພືດຂອງ ສປປ ລາວ ຈາກຄວາມສ່ຽງ ແລະອັນຕະລາຍທີ່ອາດເກີດຂຶ້ນຈາກເຄື່ອນຍ້າຍຜະລິດຕະພັນ ສິນຄ້າກະສິກຳ ແລະ ປ່າໄມ້ ຢູ່ພາຍໃນແລະລະຫວ່າງປະເທດ ແນໃສ່ປັບປຸງບັນດາມາດຕະການ ທີ່ກ່ຽວຂ້ອງ ຂອງ ປະເທດໃຫ້ສອດຄ່ອງກັບສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ຫລີກເວັ້ນການສ້າງສິ່ງກີດຂວາງທີ່ບໍ່ຈຳເປັນຕໍ່ການຄ້າ.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ສຸຂານາໄມ** ໝາຍເຖິງຄວາມສະອາດ, ການມີອະນາໄມ ແລະຄວາມປອດໄພຈາກ

ຄວາມສ່ຽງກ່ຽວກັບສານພິດ, ສານຕົກຄ້າງ ແລະພະຍາດທີ່ມີຜົນເສັຍຕໍ່ສຸຂະພາບຂອງຄົນແລະສັດ;

2. **ສຸຂານາໄມພືດ** ໝາຍເຖິງ ການເຮັດໃຫ້ພືດ, ຜະລິດຕະພັນພືດ ແລະວັດຖຸອື່ນ ມີຄວາມສະອາດ, ປອດໄພຈາກສັດຕູພືດ ລວມທັງ ການຄວບຄຸມຢາປາບສັດຕູພືດ, ສານເຄມີ ແລະສານປົນເປື້ອນອື່ນໆທີ່ຢູ່ໃນພືດ;
3. **ສານປົນເປື້ອນ** ໝາຍເຖິງຢາປາບສັດຕູພືດ, ຢາສັດຕະວະແພດຕົກຄ້າງ ຫຼືວັດຖຸເຈືອປົນທີ່ບໍ່ຕ້ອງການ;
4. **ວັດຖຸອື່ນ** ໝາຍເຖິງລາຍຊື່ວັດຖຸທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນພືດ;
5. **ສັດຕູພືດ** ໝາຍເຖິງ ແມງໄມ້, ບັນດາພືດທີ່ເປັນອັນຕະລາຍ, ລວມທັງເຊື້ອໄວຣັສ, ເຫັດລາ, ແບັກທີເລັຍ, ກາຝາກ ແລະເຊື້ອພະຍາດອື່ນທີ່ສ້າງຄວາມເສຍຫາຍແກ່ພືດ ແລະສິ່ງແວດລ້ອມ;
6. **ຜະລິດຕະພັນພືດ ແລະສັດ** ໝາຍເຖິງສິນຄ້າຈາກພືດ, ສັດ ລວມທັງປາ ແລະສັດນ້ຳທີ່ມີຢູ່ພາຍໃນ ຫຼືນຳເຂົ້າຈາກຕ່າງປະເທດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການກະສິກຳ ແລະປ່າໄມ້ຂອງ ສປປ ລາວ;
7. **ມາດຕະການສຸຂານາໄມ ແລະສຸຂານາໄມພືດ** ໝາຍເຖິງມາດຕະການໃດໜຶ່ງທີ່ນຳໃຊ້ເພື່ອຈຸດປະສົງປົກປ້ອງປະເທດຊາດບໍ່ໃຫ້ໄດ້ຮັບຄວາມສ່ຽງ 4 ຢ່າງ ດັ່ງນີ້:
   - ປົກປ້ອງຊີວິດ ຫລືສຸຂະພາບຂອງພືດ ຫຼືສັດຢູ່ພາຍໃນ ສປປ ລາວ ບໍ່ໃຫ້ໄດ້ຮັບຄວາມສ່ຽງທີ່ອາດເກີດຈາກຜະລິດຕະພັນພືດ ຫຼືສັດທີ່ອາດມີສັດຕູພືດ, ພະຍາດຕ່າງໆແລະເຊື້ອຈຸລິນຊີທີ່ອາດເປັນພາຫະ ຫຼືເປັນສາເຫດກໍ່ໃຫ້ເກີດ ຫຼືແຜ່ລະບາດຂອງສັດຕູພືດ ຫຼືພະຍາດຕ່າງໆ;
   - ປົກປ້ອງຊີວິດ ຫລືສຸຂະພາບຂອງຄົນ ຫຼື ສັດຢູ່ພາຍໃນ ສປປ ລາວ ບໍ່ໃຫ້ໄດ້ຮັບຄວາມສ່ຽງຈາກທາດເພີ່ມ, ສານປົນເປື້ອນ, ສານພິດ ແລະເຊື້ອຈຸລິນຊີທີ່ເປັນສາເຫດຂອງພະຍາດຄົນ ແລະສັດທີ່ອາດມີຢູ່ໃນອາຫານ ແລະເຄື່ອງດື່ມຂອງຄົນ ຫຼືມີຢູ່ໃນອາຫານສັດ;
   - ປົກປ້ອງຊີວິດຫລືສຸຂະພາບຂອງຄົນຢູ່ພາຍໃນ ສປປ ລາວ ບໍ່ໃຫ້ໄດ້ຮັບຄວາມສ່ຽງ ແລະການລະບາດຂອງພະຍາດຄົນທີ່ອາດມີຢູ່ໃນຜະລິດຕະພັນພືດ ແລະສັດ;
   - ສະກັດກັ້ນ ຫລືຈຳກັດຄວາມສ່ຽງ ແລະການລະບາດຂອງແມງໄມ້ ຫຼືສັດຕູພືດ ຢູ່ ສປປ ລາວ ທີ່ອາດມີຢູ່ໃນຜະລິດຕະພັນພືດ ຫຼືສັດຂອງພາຍໃນ ຫຼືນຳເຂົ້າຈາກຕ່າງປະເທດ.
8. ***ການນຳໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດ*** ໝາຍເຖິງການບັງຄັບໃຊ້ນິຕິກຳທີ່ວາງອອກ ເພື່ອໃຫ້ບັນລຸການປົກປ້ອງຄວາມສ່ຽງ ຊຶ່ງລວມເອົາ: ການອອກກົດໝາຍ, ດຳລັດ, ຂໍ້ຕົກລົງ, ກົດລະບຽບ, ເງື່ອນໄຂ, ມາດຕະຖານ, ຄຳສັ່ງແນະນຳ, ການກຳນົດຂັ້ນຕອນ,ວິທີການ, ການທົດສອບ, ການກວດກາ, ການຢັ້ງຢືນ, ການກັກກັນ ລວມທັງການກຳນົດເງື່ອນໄຂຂອງການເຄື່ອນຍ້າຍ ແລະການຂົນສົ່ງ, ການເກັບກຳສະຖິ

ຕິ, ການສຸ່ມເກັບຕົວຢ່າງເພື່ອທົດສອບ, ການຄຸ້ມຄອງຄວາມສ່ຽງ, ການຫຸ້ມຫໍ່ ແລະ ການຕິດສະຫລາກດ້ານຄວາມປອດໄພຂອງອາຫານ;

9. **ສົນທິສັນຍາ** ໝາຍເຖິງສົນທິສັນຍາສາກົນທີ່ກ່ຽວຂ້ອງທີ່ ສປປ ລາວ ເປັນພາຄີ;

10. **ຈຸດສອບຖາມກ່ຽວກັບສຸຂານາໄມແລະສຸຂານາໄມພືດ** ໝາຍເຖິງການຈັດຕັ້ງໜຶ່ງທີ່ຖືກສ້າງຂຶ້ນຢູ່ກະຊວງກະສິກຳ ແລະປ່າໄມ້ ທີ່ມີທີ່ຕັ້ງ, ພາລະບົດບາດ ແລະການເຄື່ອນໄຫວຕາມຂໍ້ຕົກລົງ ເລກທີ 1502/ກປ, ລົງວັນທີ 23 ມິຖຸນາ 2011;

11. **ຄວາມໂປ່ງໃສ** ໝາຍເຖິງການແຈ້ງຂໍ້ມູນຂ່າວສານກ່ຽວກັບບັນດາມາດຕະການສຸຂານາໄມ ແລະສຸຂານາໄມພືດທີ່ ສປປ ລາວ ກຳລັງສ້າງ, ຖືກຮັບຮອງແລະປະກາດໃຊ້ໃຫ້ແກ່ສາທາລະນະຊົນ, ອົງການຈັດຕັ້ງແລະຜູ້ປະກອບການທັງຢູ່ພາຍໃນ ແລະຕ່າງປະເທດຮັບຊາບຢ່າງເປີດເຜີຍ, ທີ່ສາມາດໃຊ້ເປັນສິ່ງອ້າງອີງ ແລະຄາດຄະເນຢ່າງເປັນທາງການໄດ້;

12. **ຄະນະກຳມະທິການກົດລະຫັດອາຫານສາກົນ** (Codex Alimentarius Commission: Codex) ແມ່ນອົງການຈັດຕັ້ງສາກົນທີ່ກຳນົດມາດຕະຖານ, ຂໍ້ກຳນົດແລະຄຳແນະນຳສາກົນດ້ານຄວາມປອດໄພຂອງອາຫານຊຶ່ງລວມມີ ທາດເພີ່ມໃນອາຫານ, ສານຕົກຄ້າງຈາກຢາປິ່ນປົວສັດແລະ ຢາປາບສັດຕູພືດ, ສິ່ງປົນເປື້ອນຕ່າງໆນັບທັງການກຳນົດວິທີການວິໄຈ, ການເກັບຕົວຢ່າງແລະການອອກກົດລະຫັດແລະຄຳແນະນຳຕ່າງໆກ່ຽວກັບການປະຕິບັດງານດ້ານຫລັກການສຸຂານາໄມ ;

13. **ອົງການພາຍຸສັດສາກົນ** (Organization International des Epizootics: OIE) ແມ່ນອົງການຈັດຕັ້ງສາກົນທີ່ກຳນົດມາດຕະຖານ,ຂໍ້ກຳນົດແລະຄຳແນະນຳສາກົນດ້ານຂະພາບສັດ ແລະພະຍາດສັດຕິດຕໍ່ສູ່ຄົນ, ນັບທັງການກຳນົດວິທີການວິໄຈ, ການເກັບຕົວຢ່າງ ແລະການອອກຄຳແນະນຳຕ່າງໆກ່ຽວກັບການປະຕິບັດງານທີ່ດີສຳລັບການຜະລິດສັດ ແລະອື່ນໆ;

14. **ສົນທິສັນຍາປ້ອງກັນພືດສາກົນ** (International Plant Protection Convention: IPPC) ແມ່ນຂໍ້ຕົກລົງສາກົນກ່ຽວກັບສຸຂະພາບພືດແນໃສ່ປ້ອງກັນພືດບ້ານ ແລະພືດປ່າຈາກການເກີດ ແລະແຜ່ລະບາດຂອງພະຍາດ ແລະສັດຕູພືດ;

15. **ການປະເມີນຄວາມສ່ຽງ** ໝາຍເຖິງການປະເມີນຄວາມເປັນໄປໄດ້ຂອງການເຂົ້າມາ, ການເກີດ ຫຼືການແຜ່ລະບາດຂອງສັດຕູພືດ ຫລືພະຍາດໃດໜຶ່ງຢູ່ໃນ ສປປ ລາວ, ການວິເຄາະກ່ຽວກັບ ຜົນກະທົບທາງດ້ານຊີວະວິທະຍາ ແລະເສດຖະກິດທີ່ອາດຈະເກີດຂຶ້ນຕາມມາ ລວມເຖິງການປະເມີນຄວາມເປັນໄປໄດ້ເຖິງຜົນກະທົບທີ່ອາດເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດຢູ່ ສປປ ລາວ ທີ່ເກີດຈາກການມີທາດເພີ່ມ, ສານປົນເປື້ອນ, ສານພິດ ຫລືພະຍາດທີ່ເກີດ ຈາກສິ່ງທີ່ມີຊີວິດຢູ່ໃນອາຫານ,ເຄື່ອງດື່ມ ຫລືອາຫານສັດເພື່ອນຳໃຊ້ສຳລັບວາງມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດ;

16. **ລະດັບການປົກປ້ອງສຸຂານາໄມຫລືສຸຂານາໄມພືດທີ່ເໝາະສົມ** ໝາຍເຖິງລະດັບທີ່ກຳນົດຂຶ້ນໂດຍອົງການຄຸ້ມຄອງວຽກງານກະສິກຳແລະປ່າໄມ້ ແລະສາທາລະນະສຸກ

ຂອງ ສປປ ລາວ, ຊຶ່ງລວມມີ ການກຳນົດລະດັບສານຕົກຄ້າງຈາກຢາປາບສັດຕູພືດ, ທາດເພີ່ມໃນອາຫານ, ສານຕົກຄ້າງຂອງຢາສັດຕະວະແພດ, ຈຳນວນເຊື້ອຈຸລິນຊີ ແລະ ອື່ນໆໃນອາຫານ, ເຄື່ອງດື່ມ ແລະຜະລິດຕະພັນພືດ ແລະສັດ ເພື່ອປົກປ້ອງຊີວິດຫລື ສຸຂະພາບຂອງຄົນ, ສັດ ຫຼືພືດໃຫ້ມີຄວາມປອດໄພ.

## ໝວດທີ 2
## ຫຼັກການພື້ນຖານໃນການນຳໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດ

**ມາດຕາ 3. ຫຼັກການ**

ຫລັກການພື້ນຖານກ່ຽວກັບການນຳໃຊ້ມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດມີ ດັ່ງນີ້:

1. ຄວາມຈຳເປັນ;
2. ການອີງໃສ່ຫລັກຖານດ້ານວິທະຍາສາດ;
3. ຄວາມກົມກຽວ;
4. ການຮັບຮູ້;
5. ການບໍ່ຈຳແນກປະຕິບັດ;
6. ຄວາມໂປ່ງໃສ;
7. ການຄວບຄຸມ, ການກວດກາ ແລະການຮັບຮອງ;
8. ຄວາມສອດຄ່ອງກັບກົດໝາຍ, ລະບຽບການ ແລະສົນທິສັນຍາ.

**ມາດຕາ 4. ຄວາມຈຳເປັນ**

ມາດຕະການສຸຂານາໄມ ແລະສຸຂານາໄມພືດຕ້ອງນຳໃຊ້ເທົ່າທີ່ມີຄວາມຈຳເປັນ ແລະ ຮັບປະກັນໃຫ້ສາມາດປ້ອງກັນຄວາມສ່ຽງທີ່ຈະເປັນຜົນກະທົບຕໍ່ຊີວິດ ຫລືສຸຂະພາບຂອງຄົນ, ສັດ ຫຼື ພືດ ແລະຕໍ່ປະເທດຊາດ. ມາດຕະການດັ່ງກ່າວຕ້ອງບໍ່ເປັນການສ້າງອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າ ແລະຕ້ອງມີຄວາມເປັນໄປໄດ້ໃນທາງປະຕິບັດທັງທາງດ້ານເຕັກນິກ ແລະດ້ານເສດຖະກິດ.

**ມາດຕາ 5. ການອີງໃສ່ຫຼັກຖານດ້ານວິທະຍາສາດ**

ບັນດາມາດຕະການສຸຂານາໄມ ແລະສຸຂານາໄມພືດທີ່ຖືກນຳໃຊ້ຕ້ອງອີງໃສ່ຫລັກຖານ ຫຼືການ ຢັ້ງຢືນທາງດ້ານວິທະຍາສາດ. ໃນກໍລະນີທີ່ບໍ່ທັນມີຂໍ້ມູນຢັ້ງຢືນທາງວິທະຍາສາດຢ່າງພຽງພໍມາດຕະ ການ ດັ່ງກ່າວຕ້ອງອີງໃສ່ຂໍ້ມູນເພີ່ມອື່ນຊຶ່ງເຫັນວ່າມີຄວາມກ່ຽວຂ້ອງ ແລະໃກ້ຄຽງກັບຄວາມເປັນຈິງ ຫລາຍທີ່ສຸດ. ຂໍ້ມູນເພີ່ມທີ່ນຳໃຊ້ເພື່ອເປັນບ່ອນອີງນັ້ນກໍຕ້ອງແມ່ນໄດ້ຈາກການປະເມີນ ຄວາມສ່ຽງ ພາຍໃນກຳນົດເວລາທີ່ສົມເຫດສົມຜົນ, ຖືກຕ້ອງຕາມຜົນ ແລະຈຸດປະສົງຂອງການປະເມີນຄວາມສ່ຽງ ໃນເວລານັ້ນອີກດ້ວຍ.

**ມາດຕາ 6. ຄວາມກົມກຽວ**

ບັນດາມາດຕະການທີ່ຖືກນຳໃຊ້ຕ້ອງໃຫ້ມີຄວາມກົມກຽວ ໂດຍຕ້ອງອີງໃສ່ມາດຕະຖານ

ຄຳແນະນຳ ຫຼືຄຳສະເໜີຂອງອົງການຈັດຕັ້ງສາກົນ ຫຼືຂອງພາກພື້ນທີ່ກ່ຽວຂ້ອງ. ໃນໄລຍະເວລາທີ່ ສປປ ລາວ ບໍ່ທັນສາມາດນຳໃຊ້ມາດຕະຖານທີ່ສອດຄ່ອງກັບມາດຕະຖານສາກົນເປັນບ່ອນອີງໄດ້, ກໍໃຫ້ອີງໃສ່ມາດຕະຖານທີ່ກ່ຽວຂ້ອງຂອງພາກພື້ນ. ແຕ່ຖ້າຫາກບໍ່ທັນສາມາດນຳໃຊ້ ຫຼືອີງໃສ່ມາດຕະຖານ ຂອງພາກພື້ນໄດ້ນັ້ນ ກໍຕ້ອງອີງໃສ່ຜົນຂອງການປະເມີນຄວາມສ່ຽງ ດ້ວຍວິທີການປະເມີນຄວາມສ່ຽງທີ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກຳນົດອອກ.

ການກຳນົດລະດັບການປົກປ້ອງສຸຂານາໄມ ຫລືສຸຂານາໄມພືດທີ່ເໝາະສົມ ຂອງ ສປປລາວ ໃດໜຶ່ງທີ່ສູງກວ່າມາດຕະຖານສາກົນ ຕ້ອງມີການວິເຄາະວິໄຈທາງດ້ານວິທະຍາສາດ ຫລືຕ້ອງມີການຄົ້ນຄວ້າຢ່າງເໝາະສົມ ເພື່ອໃຫ້ສາມາດຮັບປະກັນການນຳໃຊ້ບັນດາຫລັກການທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ເພື່ອເປັນການຍົກລະດັບມາດຕະຖານຄວາມປອດໄພຂອງອາຫານ, ຢາ, ຜະລິດຕະພັນພືດ ແລະສັດ ໃຫ້ໄດ້ຕາມມາດຕະຖານສາກົນ, ອົງການຄຸ້ມຄອງການນຳໃຊ້ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຕ້ອງເອົາໃຈໃສ່ຮ່ວມມືກັບອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເຊັ່ນ: ຄະນະກຳມະທິການກົດລະຫັດອາຫານສາກົນ, ອົງການພາຍຸສັດສາກົນ, ອົງການສົນທິສັນຍາປ້ອງກັນພືດສາກົນ, ອົງການຈັດຕັ້ງຂອງປະຊາຄົມອາຊຽນ ຫຼືອົງການຈັດຕັ້ງອື່ນທີ່ ສປປ ລາວ ເຂົ້າເປັນພາຄີ.

**ມາດຕາ 7. ການຮັບຮູ້**

ອົງການຄຸ້ມຄອງວຽກງານສຸຂານາໄມ ແລະສຸຂານາໄມພືດຂອງສປປລາວຮັບຮູ້ບັນດາມາດຕະການສຸຂານາໄມ ແລະສຸຂານາໄມພືດທີ່ປະເທດສົ່ງອອກນຳໃຊ້ຢ່າງເທົ່າທຽມກັນຖ້າຫາກມາດຕະການດັ່ງກ່າວນັ້ນ ໄດ້ບັນລຸລະດັບການປົກປ້ອງດ້ານສຸຂານາໄມແລະສຸຂານາໄມພືດທີ່ເໝາະສົມຂອງ ສປປ ລາວ ແລະໄດ້ຜ່ານຂັ້ນຕອນ ການກວດກາຢັ້ງຢືນຢູ່ປະເທດສົ່ງອອກຕາມລະບຽບການ. ການຮັບຮູ້ມາດຕະການດັ່ງກ່າວນັ້ນຕ້ອງໄດ້ເຫັນດີຢ່າງເປັນທາງການ ໂດຍທັງສອງຝ່າຍ.

ການຮັບຮູ້ນັ້ນ ຍັງລວມເຖິງການແຈ້ງໃຫ້ຊາບຂອງປະເທດສົ່ງອອກກ່ຽວກັບເຂດປອດພະຍາດສັດຫຼືປອດສັດຕູພືດ, ຫຼືເຂດທີ່ມີພະຍາດ ຫຼືສັດຕູພືດແຜ່ລະບາດຕໍ່າ ນັບທັງການສະແດງຫຼັກຖານຢັ້ງຢືນໃຫ້ເຫັນວ່າເຂດດັ່ງກ່າວກຳລັງສ້າງຫລືເປັນເຂດທີ່ສືບຕໍ່ຮັກສາໃຫ້ເປັນເຂດປອດພະຍາດ ຫຼືສັດຕູພືດ ຫຼືສືບຕໍ່ເປັນເຂດທີ່ມີພະຍາດ ຫຼືສັດຕູພືດແຜ່ລະບາດຕໍ່າອີກດ້ວຍ.

**ມາດຕາ 8. ການບໍ່ຈຳແນກປະຕິບັດ**

ການນຳໃຊ້ມາດຕາການດ້ານສຸຂານາໄມ ແລະສຸຂານາໄມພືດໃດໜຶ່ງຕ້ອງບໍ່ມີການຈຳແນກປະຕິບັດລະຫວ່າງ ສປປ ລາວ ກັບຕ່າງປະເທດ ຫຼືລະຫວ່າງຄູ່ຄ້າດ້ວຍກັນ ຫຼືບໍ່ກໍ່ໃຫ້ເກີດການຈຳກັດດ້ານການຄ້າລະຫວ່າງປະເທດແບບແອບແຝງ. ໃນກໍລະນີທີ່ມີການຈຳແນກປະຕິບັດ, ການປະຕິບັດດັ່ງກ່າວ ຕ້ອງບໍ່ແມ່ນການເຮັດແບບຕາມໃຈ ຫຼືບໍ່ມີເຫດຜົນທາງດ້ານວິຊາການມາຢັ້ງຢືນ.

**ມາດຕາ 9. ຄວາມໂປ່ງໃສ**

ທຸກມາດຕະການທີ່ນຳໃຊ້ເພື່ອຄຸ້ມຄອງດ້ານສຸຂານາໄມແລະສຸຂານາໄມພືດຕ້ອງນຳໃຊ້ຢ່າງມີຄວາມໂປ່ງໃສ. ການຮ່າງ, ການຮັບຮອງ ແລະການນຳໃຊ້ມາດຕະການໃດໜຶ່ງຕ້ອງມີການຈັດພິມຢ່າງເປັນທາງການ ແລະແຈ້ງການຢ່າງກວ້າງຂວາງ. ໃນຂັ້ນຕອນການຮ່າງ ຫຼືກ່ອນການຮັບຮອງຕ້ອງແຈ້ງ

ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ເພື່ອມີຄໍາເຫັນຢ່າງໜ້ອຍຫົກສິບ (60) ວັນ ແລະເມື່ອມາດຕະການຖືກຮັບຮອງເອົາແລ້ວກໍຕ້ອງມີການເຜີຍແຜ່ຜ່ານສື່ມວນຊົນທີ່ເປັນທາງການໃຫ້ສາທາລະນະຊົນຮັບຊາບຢ່າງໜ້ອຍໜຶ່ງຮ້ອຍແປດສິບ (180) ວັນຢ່າງເປີດເຜີຍກ່ອນຈຶ່ງໃຫ້ມີຜົນບັງຄັບໃຊ້.

ໃນກໍລະນີຈໍາເປັນຕ້ອງໄດ້ນໍາໃຊ້ມາດຕະການຮີບດ່ວນ, ເພື່ອປົກປ້ອງຊີວິດ ຫລືສຸຂະພາບຂອງຄົນ, ສັດຫລືພືດ, ການແຈ້ງການເພື່ອຂໍຄໍາເຫັນຈາກສາທາລະນະຊົນກ່ອນການຮັບຮອງປະກາດໃຊ້ອາດຖືກຍົກເວັ້ນໄດ້ແຕ່ມາດຕະການຮີບດ່ວນນັ້ນຕ້ອງໃຫ້ຈັດຕັ້ງປະຕິບັດໂດຍທັນທີ ແລະຕ້ອງມີການອະທິບາຍຢ່າງຊັດເຈນເຖິງເຫດຜົນ ແລະຄວາມຈໍາເປັນຂອງການປະກາດໃຊ້ມາດຕະການທີ່ຮີບດ່ວນນັ້ນ ແລະຕ້ອງໃຫ້ຄໍາແນະນໍາກ່ຽວກັບວິທີການ ແລະກໍານົດລາຍການຜະລິດຕະພັນພືດ ຫຼືສັດທີ່ຈໍາເປັນຕ້ອງຖືກນໍາໃຊ້ມາດຕະການຮີບດ່ວນນັ້ນແນບໄປພ້ອມ.

**ມາດຕາ 10. ການຄວບຄຸມ, ການກວດກາ ແລະການຮັບຮອງ**

ບັນດາຂັ້ນຕອນ, ວິທີການເພື່ອຄວບຄຸມ, ກວດກາ ແລະຮັບຮອງທີ່ຕິດພັນກັບການນໍາໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດຊຶ່ງລວມເອົາການເກັບຕົວຢ່າງ, ການກວດສອບ ແລະການຢັ້ງຢືນກ່ຽວກັບຜະລິດຕະພັນພືດ ແລະສັດ ຕ້ອງປະຕິບັດຕາມຂໍ້ກໍານົດຂອງສັນຍາວ່າດ້ວຍການນໍາໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ບັນດາຂັ້ນຕອນການກວດກາ ແລະຢັ້ງຢືນຕ້ອງປະຕິບັດຢ່າງບໍ່ຊັກຊ້າ ບົນພື້ນຖານບໍ່ຈໍາແນກປະຕິບັດ;
2. ການຢັ້ງຢືນ ຕ້ອງມີການຈັດພິມ ແລະລາຍງານຢ່າງເປັນລາຍລັກອັກສອນໂດຍບໍ່ຊັກຊ້າ;
3. ຂໍ້ມູນຂ່າວສານທີ່ຕ້ອງຮຽກຮ້ອງໃຫ້ປະກອບ ຕ້ອງຈໍາກັດ ແລະໃຫ້ມີສະເພາະແຕ່ສິ່ງທີ່ຈໍາເປັນສໍາລັບຂັ້ນຕອນປະຕິບັດເທົ່ານັ້ນ. ການຮັກສາຄວາມລັບຂອງຂໍ້ມູນຂອງ ຜະລິດຕະພັນພືດ ຫຼືສັດລວມທັງການປົກປ້ອງຜົນປະໂຫຍດອັນຊອບທໍາທາງການຄ້າຂອງຜະລິຕະພັນພາຍໃນແລະນໍາເຂົ້າຕ້ອງຮັບປະກັນບໍ່ໃຫ້ມີຄວາມແຕກໂຕນກັນ;
4. ໃນການນໍາໃຊ້ມາດຕະການສຸຂານາໄມ ແລະສຸຂານາໄມພືດ ຕ້ອງໃຫ້ມີກົນໄກການກວດສອບຄືນໃນກໍລະນີທີ່ມີຄໍາເຫັນຮຽກຮ້ອງໃຫ້ກວດຄືນ ຫລືມີການຕິດຕາມການປັບປຸງແກ້ໄຂໃຫ້ຖືກຕ້ອງກ່ຽວກັບການດໍາເນີນການຂອງຜູ້ປະກອບການ.

**ມາດຕາ 11. ຄວາມສອດຄ່ອງກັບກົດໝາຍ, ລະບຽບການ ແລະສົນທິສັນຍາ**

ບັນດາມາດຕະການສຸຂານາໄມ ຫລືສຸຂານາໄມພືດທີ່ນໍາໃຊ້ຕ້ອງໃຫ້ສອດຄ່ອງກັບນິຕິກໍາຂອງຊາດ ແລະສົນທິສັນຍາກ່ຽວຂ້ອງທີ່ສປປລາວເຂົ້າເປັນພາຄີ ໂດຍໃຫ້ອີງຕາມເງື່ອນໄຂທີ່ເປັນພື້ນຖານ ດັ່ງນີ້:

1. ມາດຕະການເພື່ອປົກປ້ອງຊີວິດຫລືສຸຂະພາບຂອງຄົນ, ສັດ ແລະພືດ ຕ້ອງສອດຄ່ອງກັບກົດໝາຍ ແລະລະບຽບການຂອງ ສປປ ລາວ;
2. ໃນກໍລະນີທີ່ຂໍ້ກໍານົດໃດໜຶ່ງຂອງກົດໝາຍ ຫຼືລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ບໍ່ທັນສອດຄ່ອງກັບຂໍ້ກໍານົດໃນສົນທິສັນຍາສາກົນທີ່ກ່ຽວຂ້ອງໃດໜຶ່ງທີ່ ສປປ ລາວ ເປັນ

ພາຄີ, ຂໍ້ກຳນົດຂອງສົນທິສັນຍາດັ່ງກ່າວຕ້ອງຖືກນຳໃຊ້ຈົນກວ່າກົດໝາຍ ຫຼືລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ໄດ້ຖືກປັບປຸງແກ້ໄຂໃຫ້ສອດຄ່ອງແລະປະກາດໃຊ້ແລ້ວ;

3. ໃນກໍລະນີທີ່ຂໍ້ກຳນົດທີ່ກ່ຽວຂ້ອງໃດໜຶ່ງບໍ່ທັນໄດ້ກຳນົດຢູ່ໃນກົດໝາຍ ແລະລະບຽບການຂອງ ສປປລາວ, ໃຫ້ນຳໃຊ້ຂໍ້ກຳນົດທີ່ມີຢູ່ໃນສົນທິສັນຍາທີ່ກ່ຽວຂ້ອງໄປກ່ອນຈົນກວ່າຈະມີກົດໝາຍ ຫຼື ລະບຽບການທີ່ເທົ່າທຽມກັນ ຂອງ ສປປ ລາວ ຖືກສ້າງ ແລະມີຜົນບັງຄັບໃຊ້.

## ໝວດທີ 3
## ການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການສຸຂານາໄມ ແລະສຸຂານາໄມພືດ

### ມາດຕາ 12. ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດ

ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການພື້ນຖານສຸຂານາໄມ ແລະສຸຂານາໄມພືດ ປະກອບດ້ວຍ:

1. ຂະແໜງການກະສິກຳ ແລະປ່າໄມ້ ຊຶ່ງມີ: ຫ້ອງການກະຊວງ, ກົມແຜນການ, ກົມປູກຝັງ, ກົມລ້ຽງສັດ ແລະການປະມົງ, ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ ຫ້ອງການກະສິກຳ ແລະປ່າໄມ້ເມືອງ;
2. ຂະແໜງການສາທາລະນະສຸກ ແມ່ນກົມອາຫານ ແລະຢາ;
3. ຂະແໜງການອື່ນທີ່ກ່ຽວຂ້ອງແມ່ນ: ຂະແໜງອຸດສາຫະກຳ ແລະການຄ້າ, ຂະແໜງວິທະຍາສາດ ແລະເຕັກໂນໂລຊີ ແລະຂະແໜງການອື່ນຕາມຄວາມຈຳເປັນແຕ່ລະໄລຍະ.

### ມາດຕາ 13. ໜ້າທີ່ຂອງຂະແໜງການກະສິກຳ ແລະປ່າໄມ້

ໃນການຄຸ້ມຄອງ ແລະຈັດຕັ້ງປະຕິບັດສຸຂານາໄມ ແລະສຸຂານາໄມພືດ ຂະແໜງການກະສິກຳ ແລະປ່າໄມ້ ມີໜ້າທີ່ ດັ່ງນີ້:

1. ຫ້ອງການກະຊວງກະສິກຳ ແລະປ່າໄມ້ ມີໜ້າທີ່ຊຸກຍູ້ ແລະປະສານສົມທົບກັບກົມກ່ຽວຂ້ອງເພື່ອຄົ້ນຄວ້າເນື້ອໃນຂອງຫລັກການ ແລະກຳນົດແຜນປັບປຸງບັນດານິຕິກຳ, ຍຸດທະສາດ ແລະການພັດທະນາກົນໄກການຄຸ້ມຄອງຂອງຂະແໜງການກະສິກຳ ແລະປ່າໄມ້ໃຫ້ສາມາດຈັດຕັ້ງປະຕິບັດຫລັກການພື້ນຖານທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ກົມແຜນການກະຊວງກະສິກຳ ແລະປ່າໄມ້ ມີໜ້າທີ່ສະເໜີໂຄງຮ່າງການຈັດຕັ້ງ, ກຳນົດພາລະບົດບາດຂອງຈຸດສອບຖາມ ແລະປະສານສົມທົບກັບບັນດາກົມແລະຂະແໜງການອື່ນທີ່ກ່ຽວຂ້ອງໃນການສ້າງຈຸດປະສານງານ ເພື່ອຕອບຄຳຖາມ ແລະສະໜອງຂໍ້ມູນກ່ຽວກັບການນຳໃຊ້ ແລະປະຕິບັດຫລັກການພື້ນຖານຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
3. ກົມລ້ຽງສັດ ແລະການປະມົງ ແລະກົມປູກຝັງກະຊວງກະສິກຳ ແລະປ່າໄມ້ມີໜ້າທີ່ດັ່ງນີ້:

- ກວດຄືນບັນດາມາດຕະການທີ່ນຳໃຊ້ຢູ່ໃນປະຈຸບັນ ຖ້າຍັງບໍ່ທັນມີຄົບຖ້ວນ ໃຫ້ເປັນເຈົ້າການຮ່າງຂຶ້ນເພີ່ມເຕີມເພື່ອຮັບປະກັນໃຫ້ຫຼັກການພື້ນຖານທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ໄດ້ຖືກນຳໃຊ້ຢ່າງຄົບຖ້ວນສົມບູນ;
- ປັບປຸງບັນດາມາດຕະການທີ່ມີແລ້ວທີ່ຍັງບໍ່ທັນສອດຄ່ອງກັບຫລັກການພື້ນຖານທີ່ກຳນົດໃນຂໍ້ຕົກລົງສະບັບນີ້;
- ຕິດຕາມ ແລະລາຍງານກ່ຽວກັບຄວາມຄືບໜ້າ ແລະບັນຫາຂອງການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ແກ່ໜ່ວຍງານກ່ຽວຂ້ອງຂອງກະຊວງ ແລະລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ຮັບຊາບຢ່າງເປັນປົກກະຕິ;
- ເຜີຍແຜ່ຂໍ້ຕົກລົງ ແລະມາດຕະການທີ່ກ່ຽວຂ້ອງໃຫ້ແກ່ຂະແໜງການອື່ນ ແລະສາທາລະນະຊົນຊາບຕາມໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ;
- ປະສານກັບ ກົມແຜນການ ແລະຂະແໜງການອື່ນທີ່ກ່ຽວຂ້ອງເພື່ອຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃຫ້ມີປະສິດທິຜົນສູງ;

4. ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນ ມີໜ້າທີ່ ດັ່ງນີ້:
   - ຕິດຕາມ ແລະລາຍງານກ່ຽວກັບຄວາມຄືບໜ້າ ແລະບັນຫາຂອງການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ແກ່ໜ່ວຍງານກ່ຽວຂ້ອງຕາມສາຍຕັ້ງ ແລະສາຍຂວາງຂອງຕົນຮັບຊາບຢ່າງເປັນປົກກະຕິ;
   - ເຜີຍແຜ່ຂໍ້ຕົກລົງ ແລະມາດຕະການທີ່ກ່ຽວຂ້ອງໃຫ້ແກ່ຂະແໜງການຕົນ, ພາກສ່ວນຕ່າງໆລະດັບແຂວງ ແລະເມືອງ ລວມທັງສາທາລະນະຊົນຮັບຊາບຕາມໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ;
   - ປະສານກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ;
   - ປະຕິບັດຕາມທິດຊີ້ນຳຂອງກະຊວງ ກະສິກຳ ແລະປ່າໄມ້ ທີ່ຕິດພັນກັບຂໍ້ຕົກລົງສະບັບນີ້.
5. ໜ້າທີ່ຂອງຫ້ອງການກະສິກຳ ແລະປ່າໄມ້ເມືອງ:
   - ຕິດຕາມ ແລະລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ແກ່ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນຫຼວງ ໂດຍຜ່ານຂະແໜງລ້ຽງສັດ ແລະການປະມົງ (ກໍລະນີທີ່ຕິດພັນກັບສັດ) ຫຼືຂະແໜງປູກຝັງ (ກໍລະນີຕິດພັນກັບພືດ);
   - ປະສານກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນຢູ່ພາຍໃນເມືອງຂອງຕົນໃຫ້ມີປະສິດທິຜົນ;
   - ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ແລະສາທາລະນະຊົນຢູ່ພາຍໃນເມືອງຂອງຕົນຕາມຄວາມເໝາະສົມ;
   - ປະຕິບັດຕາມທິດຊີ້ນຳຂອງຂັ້ນເທິງຂອງຕົນທີ່ຕິດພັນກັບຂໍ້ຕົກລົງສະບັບນີ້.

**ມາດຕາ 14. ການຮ່ວມມືກັບຂະແໜງການສາທາລະນະສຸກ**

ເພື່ອໃຫ້ບັນລຸ ແລະນຳໃຊ້ຫລັກການພື້ນຖານ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ,

ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການສຸຂານາໄມແລະສຸຂານາໄມພືດຂອງຂະແໜງການກະສິກຳ ແລະປ່າໄມ້ ຕ້ອງສ້າງກົນໄກ ເພື່ອຮ່ວມມື ແລະປະສານສົມທົບກັບຂະແໜງສາທາລະນະສຸກຢ່າງໃກ້ຊິດ.ໂດຍຖືເອົາກົມອາຫານ ແລະຢາ, ກະຊວງສາທາລະນະສຸກເປັນຈຸດປະສານງານ ແລະຮ່ວມມື ເພື່ອຈັດຕັ້ງປະຕິບັດ ມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດຂອງ ສປປ ລາວໃຫ້ມີປະສິດທິພາບ ແລະປະສິດທິຜົນສູງ.

**ມາດຕາ 15. ການຮ່ວມມືກັບຂະແໜງການອື່ນທີ່ກ່ຽວຂ້ອງ**

1. ການຮ່ວມມືກັບຂະແໜງອຸດສາຫະກຳ ແລະການຄ້າ:
   - ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການສຸຂານາໄມ ແລະສຸຂານາໄມພືດຂອງຂະແໜງການກະສິກຳ ແລະປ່າໄມ້ ຕ້ອງປະສານສົມທົບ ແລະສະໜອງຂໍ້ມູນຂ່າວສານໃຫ້ແກ່ໜ່ວຍງານແຈ້ງຂໍ້ມູນກ່ຽວກັບສຸຂານາໄມ ແລະສຸຂານາໄມພືດ (SPS) ແລະສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (TBT) ເພື່ອໃຫ້ສາມາດສະໜອງຂໍ້ມູນກ່ຽວກັບການນຳໃຊ້ມາດຕະການດ້ານສຸຂານາໄມແລະສຸຂານາໄມພືດຂອງ ສປປລາວ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທັງພາຍໃນ ແລະຕ່າງປະເທດຮັບຊາບຢ່າງວ່ອງໄວ ແລະມີປະສິດທິພາບສູງ;
   - ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງອຸດສາຫະກຳ ແລະການຄ້າໃນການກຳນົດລາຍການສິນຄ້າ ແລະການຮ່າງຂໍ້ກຳນົດ ແລະນະໂຍບາຍຕ່າງໆເພື່ອຊຸກຍູ້ຜູ້ປະກອບການ ແລະ ສາທາລະນະຊົນໃຫ້ເຂົ້າຮ່ວມໃນການປະຕິບັດມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດ ໃຫ້ໄດ້ຮັບຜົນດີ;
2. ການຮ່ວມມືກັບຂະແໜງວິທະຍາສາດ ແລະເຕັກໂນໂລຊີ:
   - ໃຫ້ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດຫລັກການສຸຂານາໄມ ແລະສຸຂານາໄມພືດຂອງຂະແໜງການກະສິກຳ ແລະປ່າໄມ້ ປະສານສົມທົບກັບຂະແໜງວິທະຍາສາດ ແລະເຕັກໂນໂລຊີ ເພື່ອສ້າງກົນໄກປະສານງານລະຫວ່າງຈຸດສອບຖາມດ້ານສຸຂານາໄມ ແລະສຸຂານາໄມພືດ (SPS) ກັບຈຸດສອບຖາມສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ (TBT) ໃຫ້ສາມາດຄຸ້ມຄອງ, ກວດກາ ແນໃສ່ອຳນວຍຄວາມສະດວກດ້ານການຄ້າ ແລະຫລີກເວັ້ນການເຮັດວຽກທີ່ຊ້ຳຊ້ອນກັນ;
   - ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງວິທະຍາສາດ ແລະເຕັກໂນໂລຊີໃນການກຳນົດລາຍການສິນຄ້າ ແລະການຮ່າງຂໍ້ກຳນົດ ແລະນະໂຍບາຍຕ່າງໆເພື່ອຊຸກຍູ້ຜູ້ປະກອບການ ແລະສາທາລະນະຊົນ ໃຫ້ເຂົ້າຮ່ວມໃນການປະຕິບັດມາດຕະການດ້ານສຸຂານາໄມ ແລະສຸຂານາໄມພືດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 16. ການພັດທະນາ, ປັບປຸງລະບົບມາດຕະການສຸຂານາໄມ ແລະສຸຂານາໄມພືດ**

ມອບໃຫ້ອົງການຄຸ້ມຄອງ ແລະຈັດຕັ້ງປະຕິບັດ ສຸຂານາໄມ ແລະສຸຂານາໄມພືດຂອງຂະແໜງການກະສິກຳ ແລະປ່າໄມ້ ຫລັກການພື້ນຖານໃນການນຳໃຊ້ມາດຕະການດ້ານສຸຂານາໄມແລະສຸຂານາໄມພືດ

ຢ່າງເຂັ້ມງວດ ແລະ ເປັນເຈົ້າການຄົ້ນຄວ້າສ້າງ ຫລື ປັບປຸງບັນດານິຕິກຳ, ລະບຽບການ, ມາດຕະຖານ ແລະ ຄຳແນະນຳທີ່ກ່ຽວຂ້ອງຕາມຄວາມຮັບຜິດຊອບຂອງຕົນເພື່ອຮັບປະກັນໃຫ້ແກ່ການປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ຄົບຖ້ວນສົມບູນ. ເພື່ອໃຫ້ມີການພັດທະນາຕ້ອງສ້າງແຜນຍຸດທະສາດເພື່ອປັບປຸງພື້ນຖານວັດຖຸເຕັກນິກ, ເຄື່ອງມືອຸປະກອນ ແລະ ກໍ່ສ້າງບຸກຄະລາກອນແນໃສ່ພັດທະນາວຽກງານສຸຂານາໄມ ແລະ ສຸຂານາໄມພືດຂອງປະເທດໃຫ້ທັນສະໄໝເປັນທີ່ຍອມຮັບຂອງສາກົນ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

### ມາດຕາ 17. ການຈັດຕັ້ງປະຕິບັດ

ມອບໃຫ້ຫ້ອງການກະຊວງ, ກົມແຜນການ, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໂດຍການປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງໃນທົ່ວປະເທດ, ຂະແໜງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

### ມາດຕາ 18. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ **ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

ດຣ ພວງປາຣີສັກ ປຣະວົງວຽງຄຳ